

ກະຊວງສຶກສາ ຣັດ NSW

# ການກ້າວເຂົ້າໄປສູ່ Year 7 ໃນໂຮງຮຽນຫຼວງຂອງຣັຖບານ NSW

## ສະໝັກທາງອອນລາຍເພື່ອເລີ່ມຕົ້ນການປ່ຽນຜ່ານຂອງລູກທ່ານຈາກ Year 6 ຫາ Year 7.

### ໂຮງຮຽນທ້ອງຖິ່ນຂອງລູກທ່ານ

ໂຮງຮຽນຫຼວງໃນຣັດ NSW ສ່ວນຫຼາຍໄດ້ກຳນົດເຂດການຮັບນັກຮຽນເ ພື່ອໃຫ້ເດັກທີ່ມີອາຍຸເຂົ້າຮຽນທັງໝົດມີສິດເຂົ້າຮຽນໃນ ໂຮງຮຽນຫຼວງ - ໂຮງຮຽນທ້ອງຖິ່ນຂອງພວກເຂົາ.

ທີ່ຢູ່ອາໄສຖາວອນຂອງລູກທ່ານຈະກຳນົດວ່າໂຮງຮຽນໃດແມ່ນໂຮງຮຽນທ້ອງຖິ່ນຂອງລູກທ່ານ. The School Finder (ເຄື່ອງມືຊອກຫາໂຮງຮຽນ) ທີ່ education.nsw.gov.au/school-finder ສາມາດຊ່ວຍທ່ານຊອກຫາໂຮງຮຽນໃນທ້ອງຖິ່ນໄດ້.

ພໍ່ແມ່ແລະຜູ້ດູແລໃນຣັດ NSW ສ່ວນໃຫຍ່ ເລືອກໂຮງຮຽນທ້ອງຖິ່ນຂອງພວກເຂົາເພື່ອໃຫ້ການສຶກສາທີ່ດີເລີດສຳລັບລູກຂອງພວກເຂົາ. ລະບົບການລົງທະບຽນທາງອອນລາຍຂອງທາງກະຊວງສະໜັບສະໜູນການປ່ຽນຜ່ານໄປສູ່ໂຮງຮຽນມັດທະຍົມ.

ໂຮງຮຽນໃນທ້ອງຖິ່ນຮອງຮັບນັກຮຽນ ທຸກລະດັບຄວາມສາມາດ, ລວມທັງບັນດາໂຄງການຕ່າງໆເພື່ອທ້າທາຍນັກຮຽນທີ່ມີຄວາມສາມາດທີ່ເປັນໄປໄດ້ສູງແລະມີພອ ນສະຫວັນ ແລະ ທັງບັນດາໂຄງການ ສຳ ລັບນັກຮຽນທີ່ມີຄວາມຕ້ອງການຮຽນຮູ້ເພີ້ ມເຕີມແລະການຊ່ວຍເຫຼືອ. ນອກຈາກນີ້ພວກເຂົາຍັງສະເໜີກິດຈະກຳນອກຫຼັກສູດທີ່ຫຼາກຫຼາຍອີກດ້ວຍ.

ວິທະຍາໄລຫລາຍວິທະຍາເຂດຊຶ່ງລວມ ມີຈຳນວນໂຮງຮຽນຫຼືວິທະຍາເຂດຫຼ າຍແຫ່ງ, ແຕ່ລະໂຮງຮຽນ ຫຼື ວິທະຍາເຂດມີຄວາມຊ່ຽວຊານໃນຂະແໜງທີ່ແຕກຕ່າ ງກັນຕົວຢ່າງ, ມີວິທະຍາເຂດຂັ້ນຕ່ຳ (Years 7-9 ຫຼື 7-10), ວິທະຍາເຂດຂັ້ນສູງ (Years 10-12 ຫຼື 11-12), ວິທະຍາເຂດທີ່ຄັດເລືອກວິຊາຮຽນ, ວິທະຍາເຂດຮ່ວ ມສຶກສາແລະວິທະຍາເຂດເພດດ່ຽວ.

ນອກນັ້ນຍັງມີໂຮງຮຽນສູນກາງທີ່ໃຫ້ໂອກາດແກ່ຊຸມຊົນໃນຊົນນະບົດແລະຫ່າງໄກໂດດດ່ຽວຫຼາຍແຫ່ງໃນການສຶກສາອົບຮົມລູກໆຂອງພວກເຂົາຕັ້ງແຕ່ Kindergarten ຈົນເຖິງ Year 12 ໃນໂຮງຮຽນນຶ່ງ. ໂຮງຮຽນສູນກາງຫຼາຍແຫ່ງໃຊ້ເທັກໂນໂລຢີເພື່ອເຊື່ອມຕໍ່ຄູແລະນັກຮຽນໃນໂຮງຮຽນຕ່າງໆເພື່ອໃຫ້ມີວິຊາສະເພາະຫລາຍຢ່າງ. ໂຮງຮຽນສູນກາງຍັງມີກິດຈະກຳນອກຫຼັກສູດຢ່າງຫຼາກຫຼາຍ.

ຖ້າທ່ານບໍ່ສາມາດສະໝັກທາງອອນລາຍໄດ້ ຫຼືບໍ່ຕ້ອງການເຮັດແບບນັ້ນ, ກະລຸນາຕື່ມແບບຟອມໂດຍເລີ່ມຕົ້ນໃນໜ້າທີ 5 ຂອງປຶ້ມຫົວນີ້. ສົ່ງແບບຟອມທີ່ເຮັດແລ້ວກັບໄປໃຫ້ໂຮງຮຽນ ປະຖົມຂອງລູກທ່ານ.

ຂໍ້ມູນເພີ້ມຕື່ມມີໄວ້ໃຫ້ທີ່
education.nsw.gov.au/public-schools/going-to-a-public-school/enrolment/high-school-enrolment

# ທາງເລືອກໂຮງຮຽນອື່ນໆ

## ທ່ານອາດມີເຫດຜົນຕ່າງໆວ່າເປັນຫຍັງທ່ານຈຶ່ງຢາກໃຫ້ລູກຂອງທ່ານເຂົ້າໂຮງຮຽນທີ່ບໍ່ແມ່ນໂຮງຮຽນທ້ອງຖິ່ນຂອງທ່ານ.



### ບັນດາໂຮງຮຽນທີ່ບໍ່ຢູ່ໃນທ້ອງຖິ່ນ(ຫຼື ນອກ ເຂດ)

ບັນດາໂຮງຮຽນທີ່ມີພື້ນທີ່ຮັບການຈົດຊື່ເຂົ້າຮຽນທີ່ມີຂີດຈຳນວນຈຳກັດ - ຈຳນວນນັກຮຽນທີ່ສາມາດລົງທະບຽນໄດ້ໂດຍອີງໃສ່ທີ່ພັກອາໄສຖາວອນຂອງໂຮງຮຽນ. ຂີດຈຳນວນຈຳກັດການລົງທະບຽນບອກພວກ ເຮົາວ່າໂຮງຮຽນອາດຈະຮັບ ຫຼື ບໍ່ຮັບເອົາການຈົດຊື່ເຂົ້າໂຮງຮຽນທີ່ບໍ່ຢູ່ໃນທ້ອງຖິ່ນ. ໃນຂີດຈຳນວນຈຳກັດການຈົດຊື່ເຂົ້າໂຮງ ຮຽນ, ບາງໂຮງຮຽນໄດ້ກຳນົດລະດັບປ້ອງກັນການ ເຂົ້າໂຮງຮຽນໃນທ້ອງຖິ່ນເພື່ອກຳ ນົດບ່ອນຮຽນສຳລັບນັກຮຽນທ້ອງຖິ່ນທີ່ມາເຂົ້າ ໃນລະຫວ່າງປີ.

ບັນດາໂຮງຮຽນທີ່ມີຈຳນວນການຈົດຊື່ເຂົ້າຮຽນກາຍ ຫຼື ໃກ້ຈະເຖິງຂີດຈຳນວນຈຳກັດຈະບໍ່ຮັບຈົດຊື່ນັກຮຽນທີ່ບໍ່ແມ່ນທ້ອງຖິ່ນ, ນອກຈາກວ່າຈະມີສະຖານະການທີ່ໄດ້ຮັບການຍົກເວັ້ນ.

ເຖິງຢ່າງໃດກໍຕາມ, ບັນດາໂຮງຮຽນທີ່ມີບ່ອນຮຽນຕ່ຳກວ່າລະດັບປ້ອງກັນອາດຈະຮັບເອົານັກຮຽນທີ່ບໍ່ຢູ່ໃນທ້ອງຖິ່ນ.

ໃນໂຮງຮຽນທີ່ຄວາມຕ້ອງການການຈົດຊື່ເຂົ້າໂຮງຮຽນທີ່ບໍ່ແມ່ນໃນທ້ອງຖິ່ນເກີນຈຳນວນບ່ອນຮຽນທີ່ມີຢູ່ຕ່ຳກວ່າເຂດປ້ອງກັນ, ໂຮງຮຽນຕ້ອງໄດ້ພັດທະນາເງື່ອນໄຂການຈົດຊື່ເຂົ້າໂຮງຮຽນນອກເຂດແລະສ້າງຕັ້ງຄະນະຄັດເລືອກເພື່ອພິຈາລະນາຄຳຮ້ອງສະໝັກທີ່ບໍ່ແມ່ນໃນທ້ອງຖິ່ນ.

### ບັນດາໂຮງຮຽນພິເສດສະເພາະ

ໂຮງຮຽນພິເສດສະເພາະໃຫ້ການສຶກສາຂັ້ນ ມັທຍົມຊຶ່ງສຸມໃສ່ຄວາມສາມາດ ຫຼື ຄວາມສົນໃຈສະເພາະ. ບັນດາໂຮງຮຽນພິເສດສະເພາະໄດ້ຖືກຈັດຕັ້ງຂຶ້ນສຳລັບວິຊາການປະດິດສ້າງ, ສິລປະການສະແດງ, ພາສາຕ່າງໆ, ເທັກໂນໂລຢີ (ຮວມທັງ ເທັກໂນໂລຢີກ່ຽວກັບທະເລ ແລະ ເທັກໂນໂລຢີ ກ່ຽວກັບຊົນນະບົດ), ກະເສຕກັມ ແລະ ກີລາ.

ຢູ່ໃນບາງໂຮງຮຽນພິເສດສະເພາະເຫຼົ່ານີ້ ບັນດາຂໍ້ກຳນົດການຄັດເລືອກສຳລັບການຈົດຊື່ເຂົ້າຮຽນອາດຈະກວມເອົາການສະ ແດງ ຫຼື ການທົດສອບຄວາມສາມາດດ້ານການສະແດງອີກນຳ.

### ຫ້ອງຮຽນທີ່ໃຫ້ການອູ້ມຊູ

ໃນໂຮງຮຽນມັທຍົມບາງແຫ່ງມີຫ້ອງຮຽນທີ່ ໃຫ້ການຊ່ວຍເຫຼືອເພື່ອໃຫ້ການຮຽນເພີ້ມຕື່ມແກ່ບັນດານັກຮຽນທີ່ພິການ. ທ່ານຄູ ໃຫຍ່ຂອງໂຮງຮຽນປະຖົມຂອງລູກທ່ານຈະຊ່ວຍທ່ານເລືອກໂຮງຮຽນທີ່ເໝາະສົມສຳ ລັບລູກທ່ານ, ຈະພິຈາຣະນາການເລືອກຂອງທ່ານ, ຄວາມຕ້ອງການໃນການຮຽນເພີ້ມສະເພາະຂອງລູກທ່ານ ແລະ ຄວາມໃກ້ໄກຕໍ່ບໍຣິການພິເສດໃນທ້ອງຖິ່ນຂອງທ່ານ.

ການພິຈາຣະນາເພື່ອການຈັດບ່ອນເຂົ້າຮຽນ ຢູ່ໃນຫ້ອງທີ່ໃຫ້ການອູ້ມຊູນັ້ນແມ່ນຖືກຈັດການຜ່ານວິທີການການຈັດບ່ອນເຂົ້າຮຽນ.

### ໂຮງຮຽນແບບຄັດເລືອກທາງດ້ານການຮຽນ

ວິທີດຳເນີນການຂອງໃບສມັກເຂົ້າຮຽນຢູ່ ໂຮງຮຽນແບບຄັດເລືອກດ້ານການຮຽນແບບເຕັມ ຫຼື ບາງສ່ວນນັ້ນ ຈະເລີ້ມຂຶ້ນກໍຕໍ່ເມື່ອນັກຮຽນຢູ່ຊັ້ນ Year 5 ແລະ ວິທີດຳເນີນການນີ້ຈະໃຊ້ເວລາຍາວກວ່າການຈົດຊື່ເຂົ້າຮຽນແບບທັມມະດາ.

ໃບສມັກນີ້ມີໄວ້ໃຫ້ຕາມທາງອອນລາຍເທົ່າ ນັ້ນ. ກະຣຸນາຮັບຮູ້ວ່າໃບສມັກຮຽນທີ່ສົ່ງໄປຊ້າຈະບໍ່ຖືກຮັບ.

ບັນຊີລາຍຊື່ຂອງໂຮງຮຽນແບບຄັດເລືອກ ທາງດ້ານການຮຽນ ພ້ອມທັງລາຍລະອຽດຂອງວິທີການຈົດຊື່ຮຽນມີໄວ້ໃຫ້ຢູ່ທີ່: https://education.nsw.gov.au/public-schools/selective-high-schools-and-opportunity-classes

### ສູນສອນພາສາອັງກິດແບບຮວມຈຸດ

ຈົ່ງນຳໃຊ້ເຄື່ອງມືການຊອກຫາໂຮງຮຽນທີ່: https://education.nsw.gov.au/school-finder ເພື່ອ ຊອກຫາທີ່ຢູ່ຂອງບັນດາໂຮງຮຽນມັທຍົມທີ່ມີການອູ້ມຊູແບບສູນ ສອນພາສາອັງກິດແບບ ຮວມຈຸດ.

ຈົ່ງໃຫ້ທີ່ຢູ່ຂອງເຮືອນທ່ານ ຫຼື ຣະຫັດໄປ ສະນີເພື່ອຊອກຫາແຜນທີ່ໂຮງຮຽນທ້ອງຖິ່ນຂອງທ່ານ ແລະ ເລືອກກົດປຸ່ມ Intensive English Centre ຢູ່ບ່ອນ “Nearby schools”.

ເພື່ອເອົາຂໍ້ມູນເພີ້ມຕື່ມ, ກະຣຸນາຕິດຕໍ່ທ່ານຄູໃຫຍ່ຂອງໂຮງຮຽນປະຖົມທ້ອງຖິ່ນຂອງ ທ່ານ ຫຼື ໂຮງຮຽນມັທຍົມທີ່ທ່ານເລືອກ.

ຖ້າທ່ານຕ້ອງການນາຍພາສາ ເພື່ອຊ່ວຍທ່ານໃນການສອບຖາມ ກະຣຸນາໂທຫາ**ບໍຣິການ ນາຍພາສາທາງໂທຣະສັບ**ຕາມໝາຍເລກ 131 450 ແລະຂໍເອົານາຍພາສາທີ່ປາກພາສາຂອງທ່ານ. ອັນນີ້ແມ່ນບໍຣິການຟຣີສຳລັບທ່ານ.

# ການຂຽນຕື່ມຟອມສເນີຄວາມສົນໃຈ

## ທ່ານສາມາດລະບຸວ່າໂຮງຮຽນໃດທີ່ທ່ານ ຢາກໃຫ້ລູກທ່ານເຂົ້າຮຽນໂດຍການຂຽນ ຕື່ມຟອມ ການສເນີຄວາມສົນໃຈ ສໍາລັບໂຮງຮຽນທ້ອງຖິ່ນຂອງທ່ານ ແລະ/ຫຼື ຢ່າງໜ້ອຍໂຮງຮຽນນອກເຂດ ສາມແຫ່ງ.

ການຈົດຊື່ລູກທ່ານເຂົ້າຮຽນ Year 7 ນີ້ມີ ສາມຂັ້ນຕອນ:

## ຂັ້ນຕອນ1: ການຂຽນຕື່ມຟອມ ສເນີຄວາມສົນໃຈ ເພື່ອຂໍບ່ອນຮຽນ ໃນໂຮງຮຽນຫຼວງທີ່ທ່ານເລືອກ.

### ຟອມນີ້ຕ້ອງຂຽນຕື່ມເປັນພາສາອັງກິດ ໂດຍພໍ່ແມ່ແລະຜູ້ປົກຄອງຂອງ ນັກຮຽນ ທຸກໆຄົນ ທີ່ຂໍບ່ອນຮຽນໃນ Year 7 ຂອງໂຮງຮຽນຫຼວງຂອງ ຣັຖບານ NSW ໃນປີໜ້າ.

ສໍາລັບນັກຮຽນທີ່ລົງທະບຽນຢູ່ໃນໂຮງຮຽນປະ ຖົມຂອງລັດຖະບານ NSW ໃນປັດຈຸບັນ, ທ່ານສາມາດສະເໜີຄວາມສົນໃຈຕາມທາງ ອອນລາຍ ຫຼື ຕື່ມຂໍ້ມູນໃສ່ໃນແບບຟອມ ເອກະສານທີ່ຕິດຄັດມາພ້ອມນີ້ແລະສົ່ງຄືນໄປໃຫ້ໂຮງຮຽນປະຖົມ ຂອງລູກຂອງທ່ານ. ສໍາລັບນັກຮຽນທີ່ບໍ່ໄດ້ລົງທະບຽນຢູ່ໃນໂຮງຮຽນປະຖົມຂອງລັດຖະບານ NSW ໃນປັດຈຸບັນ, ທ່ານສາມາດສະເໜີຄວາມສົນໃຈຕາມທາງ ອອນລາຍ ຫຼື ສົ່ງແບບຟອມນີ້ກັບໄປຫາ ໂຮງຮຽນມັດທະຍົມ ຂອງລັດຖະບານ NSW ທີ່ທ່ານຕັ້ງໃຈຈະລົງທະບຽນລູກຂອງທ່ານ.

**ຟອມສເນີຄວາມສົນໃຈໝົດທຸກຟອມຕ້ອງຖືກສົ່ງກັບ ຄືນໄປຕາມ ຫຼື ກ່ອນວັນທີທີ່ບົ່ງໄວ້.**

## ຂັ້ນຕອນ 2: ຂຽນຕື່ມໃບຈົດຊື່ເຂົ້າຮຽນ

ຫຼັງຈາກທີ່ທ່ານໄດ້ບ່ອນຮຽນແລ້ວ, ທ່ານກໍຈະຖືກຂໍໃຫ້ຂຽນຕື່ມ **ໃບຈົດຊື່ເຂົ້າຮຽນ ໃນໂຮງຮຽນຫຼວງຂອງຣັຖບານ NSW**. ໃບຈົດຊື່ຮຽນນີ້ຈະຖືກສົ່ງໄປໃຫ້ທ່ານພາຍໃນ ຊ່ວງເທີມ 2 ຫຼື ເທີມ 3.

ໃບຄໍາຮ້ອງສະໝັກສາມາດເຮັດທາງອອນລາຍໄດ້ ຫຼື ໂດຍການຕື່ມແບບຟອມທີ່ຈະສົ່ງໃຫ້ ທ່ານໃນລະຫວ່າງພາກຮຽນເທີມ 2 ຫຼື ເທີມ 3.

ກະຣຸນາຂຽນຕື່ມຣາຍລະອຽດທຸກໆຢ່າງຢູ່ໃນຟອມນີ້ ແລະ ສົ່ງກັບຄືນໄປໃຫ້ໄວເທົ່າທີ່ໄວໄດ້.

ການຕັດສິນໃຈຄັ້ງສຸດທ້າຍໃນການຈົດຊື່ຮຽນແມ່ນຈະມີຂຶ້ນຫຼັງຈາກການພິຈາຣະນາ ແລະ ຫຼັງຈາກທີ່ທ່ານຄູໃຫຍ່ໄດ້ຮັບເອົາໃບຂໍຈົດຊື່ຮຽນຂອງທ່ານ. ທ່ານຄູໃຫຍ່ອາດຈະຕິດຕໍ່ຫາ ທ່ານເພື່ອຂໍຂໍ້ມູນເພີ້ມຕື່ມ.

ທ່ານຈະໄດ້ຮັບອີເມວ ຫຼື ຈົດໝາຍຢັ້ງຢືນວ່າລູກທ່ານໄດ້ຖືກຮັບຈົດຊື່ເຂົ້າຮຽນຫຼືບໍ່.

## ຂັ້ນຕອນ 3: ທໍາຄວາມຮູ້ຈັກກັບໂຮງຮຽນ ໃໝ່ ຂອງທ່ານ

ຫຼັງຈາກທີ່ທ່ານໄດ້ຮັບການຢັ້ງຢືນການຈົດຊື່ ເຂົ້າຮຽນຂອງລູກທ່ານແລ້ວ, ມັນເປັນສິ່ງ ສໍາຄັນໃນການຮຽນຮູ້ກ່ຽວກັບໂຮງຮຽນໃໝ່ເພື່ອຊ່ວຍອູ້ມຊູການທີ່ລູກທ່ານຍ້າຍເຂົ້າສູ່ Year 7.

ທາງໂຮງຮຽນຈະຈັດກິຈກັມການປ່ຽນຜ່ານ ແລະ ວັນໃຫ້ຂໍ້ມູນສໍາລັບບັນດານັກຮຽນ ທີ່ຈະເລີ້ມ Year 7 ໃນປີຕໍ່ໄປ. ຕາມທັມມະດາແລ້ວ ບັນດາພໍ່ແມ່ແລະຜູ້ປົກຄອງຖືກເຊີນ ໄປຮ່ວມໃນວັນໃຫ້ຂໍ້ມູນນີ້ຊຶ່ງຈະຈັດຂຶ້ນໃນທ້າຍເດືອນພຶສຈິກາ/ຕົ້ນເດືອນທັນວາ. ມັນຈະ ຊ່ວຍໃຫ້ລູກທ່ານໄດ້ຊອກຮູ້ກ່ຽວກັບບັນດາບົດຮຽນ ແລະ ວິຊາຕ່າງໆໃນໂຮງຮຽນມັທຍົມ, ບັນດານາຍຄູ, ຫ້ອງຮຽນ ແລະ ວິທີດໍາເນີນການຕ່າງໆຂອງໂຮງຮຽນ,ແລະ ຍັງເປັນການໃຫ້ ໂອກາດໄດ້ຮູ້ຈັກກັບນັກ ຮຽນຄົນອື່ນໆດ້ວຍ.

ໂຮງຮຽນໃໝ່ຂອງທ່ານຈະແຈ້ງໃຫ້ທ່ານ ຊາບເຖິງວັນທີຂອງວັນໃຫ້ຂໍ້ມູນ, ພ້ອມທັງ ຂໍ້ມູນ ກ່ຽວກັບເຄື່ອງແບບ, ທາງເລືອກການ ເດີນທາງ ແລະ ຣາຍລະອຽດທີ່ສໍາຄັນ ອື່ນໆອີກດ້ວຍ.

ຖ້າທ່ານຕ້ອງການຂໍ້ມູນເພີ້ມຕື່ມ ກະຣຸນາໂທຣະສັບຫາທ່ານຄູໃຫຍ່. ຖ້າທ່ານຕ້ອງການນາຍ ພາສາ ເພື່ອຊ່ວຍທ່ານ ກະຣຸນາໂທຫາບໍຣິການ ນາຍພາສາທາງໂທຣະສັບຕາມໝາຍເລກ **131 450** ແລະຂໍເອົານາຍພາສາ. ຜູ້ຮັບສາຍຈະຊອກເອົານາຍພາສາມາເວົ້າສາຍເພື່ອຊ່ວຍ ໃນການໂອ້ລົມຂອງທ່ານ. ທ່ານບໍ່ຕ້ອງເສັຍຄ່າໃດໆໃນບໍຣິການນີ້.

### ຂໍ້ມູນທີ່ຈະຊ່ວຍໃຫ້ທາງໂຮງຮຽນໃໝ່ຂອງທ່ານຈັດຫາການຮໍ່າຮຽນແລະການ ອູ້ມຊູຊ່ວຍເຫຼືອໃຫ້ແກ່ລູກຂອງທ່ານ.

ມັນເປັນສິ່ງສໍາຄັນທີ່ທ່ານຕ້ອງໃຫ້ຂໍ້ມູນແກ່ໂຮງຮຽນໃໝ່ຂອງທ່ານດ້ວຍຂໍ້ມູນກ່ຽວກັບການ ຮຽນແລະຄວາມຕ້ອງການການອູ້ມຊູຂອງ ລູກທ່ານ. ມັນເປັນສິ່ງຈໍາເປັນທີ່ທ່ານຕ້ອງແຈ້ງໃຫ້ ທາງໂຮງຮຽນຊາບກ່ຽວກັບອາການແພ້ໃດໆທີ່ທ່ານຮູ້ ຫຼືສະພາບການທາງການແພດອື່ນໆທີ່ ພົວພັນກັບລູກທ່ານ.

ອັນນີ້ແມ່ນຮວມເຖິງແຕ່ບໍ່ຈໍາກັດຕໍ່ຂໍ້ມູນທີ່ລູກທ່ານໄດ້ຖືກກວດເຫັນອາການແພ້ອັນ ຮ້າຍແຮງ ໂຣກຫືດ ໂຣກເບົາຫວານ ຫຼື ໂຣກບ້າໝູ.

ຖ້າລູກທ່ານຫາກໄດ້ຖືກກວດພົບວ່າມີຄວາມສ່ຽງຕໍ່ອາການແພ້ອັນຮ້າຍແຮງ ກະຣຸນາໃຫ້ຂໍ້ມູນແກ່ໂຮງຮຽນໃໝ່ຂອງລູກທ່ານພ້ອມກັບ ASCIA Action Plan for Anaphylaxis ອັນປັດຈຸບັນທີ່ໄດ້ຂຽນ ຕື່ມແລະເຊັນຊື່ແລ້ວໂດຍນາຍໝໍຂອງລູກທ່ານ.

ພ້ອມກັນກັບ ASCIA Action Plan ທາງໂຮງຮຽນຍັງຕ້ອງການ ຫຼອດສັກຢາອະເດຣ ນາລີນ ໂອໂຕອິນເຈັກເຕີ ເພື່ອຊ່ວຍໃນການຕອບ ຮັບຄວາມສຸກເສີນດ້ານສຸຂພາບທີ່ມີ ລາຍລະອຽດໄວ້ຢູ່ໃນແຜນນັ້ນແລ້ວ. ກະຣຸນາສັງເກດເບິ່ງມື້ໝົດອາຍຸທີ່ຢູ່ເທິງຫຼອດສັກຢາ ອະເດຣນາລີນ ໂອໂຕອິນເຈັກເຕີ ທີ່ໄດ້ເອົາໃຫ້ທາງໂຮງຮຽນແລະໃຫ້ເອົາຫຼອດອັນໃໝ່ໃຫ້ ໂຮງຮຽນກ່ອນເວລາໝົດອາຍຸດ້ວຍ.

## ຂໍ້ມູນເພື່ອຊ່ວຍໃຫ້ທ່ານຂຽນຟອມສະເໜີຄວາມສົນໃຈ

### ພາກ A

ກະຣຸນາຂຽນຕື່ມຣາຍລະອຽດສ່ວນຂອງລູກທ່ານ ແລະ ເຊັນຊື່ຢູ່ບ່ອນການແຈ້ງທີ່ຢູ່ໃນ **ພາກ A**.

### ພາກ B

**ພາກ B** ສະແດງໃຫ້ເຫັນຊື່ຂອງໂຮງຮຽນ ທີ່ຖືກຈັດເປັນໂຮງຮຽນທ້ອງຖິ່ນຂອງທ່ານ ໂດຍອີງຕາມທີ່ຢູ່ຂອງເຮືອນທ່ານ. ລູກ ທ່ານມີສິດໄດ້ບ່ອນຮຽນຢູ່ໃນໂຮງຮຽນທ້ອງຖິ່ນ ຂອງພວກເຂົາ.

ຖ້າທ່ານຢາກຂໍບ່ອນຮຽນຢູ່ໂຮງຮຽນທ້ອງ ຖິ່ນຂອງທ່ານເທົ່ານັ້ນ ກະຣຸນາເຊັນຊື່ຢູ່ **ພາກ B** ແລະສົ່ງຟອມນີ້ກັບຄືນໄປຕາມວັນທີທີ່ບົ່ງໄວ້. ບັດນີ້ ທ່ານກໍໄດ້ຂຽນຕື່ມ ຟອມແລ້ວ ຢ່າງສົມບູນ.

ຖ້າທ່ານໄດ້ສະໝັກເຂົ້າໂຮງຮຽນທີ່ຄັດເລືອກດ້ານການຮຽນ, ແລະທ່ານຕ້ອງການໃຫ້ລູກ ຂອງທ່ານເຂົ້າໂຮງຮຽນທ້ອງຖິ່ນຖ້າບໍ່ປະສົບຜົນສໍາເລັດ, ໃຫ້ເຊັນຊື່ ແລະ ລົງວັນທີຢູ່ **ພາກ B**.

## ພາກ C

ຖ້າທ່ານຂໍບ່ອນຮຽນບ່ອນອື່ນນຳ ກະຣຸນາ ໃສ່ເຖິງສາມໂຮງຮຽນຕາມລຳດັບທີ່ທ່ານ ມັກຢູ່ **ພາກ C**.

ທ່ານສາມາດຂໍບ່ອນຮຽນຢູ່ໃນ:

- ໂຮງຮຽນພິເສດສະເພາະ
- ຫ້ອງຮຽນທີ່ມີການຊ່ວຍເຫຼືອ (ໂດຍຜ່ານ ການປຶກສາຫາລືກັບທ່ານຄູໃຫຍ່ຂອງໂຮງ ຮຽນປະຖົມຂອງທ່ານ) ຊຶ່ງຈະເປັນຜູ້ຍື່ນໃບຄຳຮ້ອງເພື່ອຂໍຫ້ອງຮຽນປະເພດທີ່ມີການ ຊ່ວຍເຫຼືອນັ້ນໃຫ້
- ໂຮງຮຽນທີ່ບໍ່ຢູ່ໃນທ້ອງຖິ່ນ.

**ກະຣຸນາສັງເກດວ່າ ບັນດາໂຮງຮຽນພິເສດ ສະເພາະ, ແລະ ຄະນະກັມມະການຈັດບ່ອນ ຮຽນໃນໂຮງຮຽນບໍ່ຢູ່ໃນທ້ອງຖິ່ນຈະຕ້ອງມີໃບສມັກເພີ້ມຕື່ມ.**

ຖ້າທ່ານບໍ່ແນ່ໃຈວ່າທ່ານຈະຕ້ອງຂຽນຟອມ ເພີ້ມຕື່ມຫຼືບໍ່ ກະຣຸນາຕິດຕໍ່ໄປຫາໂຮງຮຽນ ທີ່ທ່ານສົນໃຈໂດຍກົງ.

**ມັນຈະມີຂັ້ນຕອນເພີ້ມອີກຂັ້ນນຶ່ງຖ້າທ່ານ ຂໍບ່ອນຮຽນໃນໂຮງຮຽນທີ່ບໍ່ຢູ່ໃນທ້ອງຖິ່ນ.**

**ບັນດາໂຮງຮຽນທີ່ມີການຄັດເລືອກເພື່ອຈັດບ່ອນເຂົ້າຮຽນສຳລັບການຈົດຊື່ຮຽນທີ່ບໍ່ຢູ່ໃນ ທ້ອງ ຖິ່ນໂດຍທີ່ມີຄວາມຕ້ອງການບ່ອນຮຽນທີ່ບໍ່ຢູ່ໃນທ້ອງຖິ່ນເກີນຈຳນວນບ່ອນຮຽນທີ່ ມີຢູ່ຕ່ຳກວ່າ ຂອບເຂດ.**

ຖ້າທ່ານຂໍບ່ອນຮຽນໃນໂຮງຮຽນທີ່ບໍ່ຢູ່ໃນ ທ້ອງຖິ່ນ ກະຣຸນາໃຫ້ເຫດຜົນຂອງການຂໍ ບ່ອນຮຽນທີ່ບໍ່ຢູ່ໃນທ້ອງຖິ່ນ ຕົວຢ່າງເຊັ່ນ:

- ອ້າຍເອື້ອຍນ້ອງທີ່ໄດ້ຈົດຊື່ເຂົ້າຮຽນໂຮງຮຽນນັ້ນແລ້ວ
- ຄວາມໃກ້ໄກ ແລະ ການເຂົ້າເຖິງໂຮງຮຽນ
- ມີສິດເຂົ້າໂຮງຮຽນເພດດຽວ
- ເຫດຜົນທາງການແພດ
- ຄວາມປອດໄພ ແລະ ການຄວບຄຸມລູກທ່ານທັງກ່ອນແລະຫຼັງໂຮງຮຽນ
- ມີບັນດາວິຊາ ຫຼື ວິຊາປະສົມຕ່າງໆຢູ່ ໃນໂຮງຮຽນ
- ສະຖານະການທີ່ໜ້າເຫັນໃຈ
- ການຈັດຕັ້ງແລະລະບົບຂອງໂຮງຮຽນ.
- ການປ່ຽນແປງຫຼ້າສຸດຂອງເຂດການຮັບເອົາການສມັກໃນທ້ອງຖິ່ນ.

ຄະນະກັມມະການຈັດບ່ອນຮຽນຈະພິຈາຣະ ນາຂໍ້ມູນທີ່ຢູ່ໃນຟອມນີ້ແລະເອກກະສານ ທີ່ກ່ຽວພັນອື່ນໆທີ່ທ່ານເອົາໃຫ້ເທົ່ານັ້ນ.

ຖ້າລູກທ່ານບໍ່ໄດ້ບ່ອນຮຽນຢູ່ໂຮງຮຽນທີ່ທ່ານເລືອກທີ 1, ລູກທ່ານກໍຈະຖືກພິຈາຣະນາ ສຳລັບບ່ອນຮຽນຢູ່ໂຮງຮຽນທີ່ທ່ານເລືອກທີ 2 ແລະ ທີ 3 ຖ້າຫາກມີ.

ຖ້າທ່ານບໍ່ໄດ້ບ່ອນຮຽນຢູ່ໃນນຶ່ງຂອງໂຮງ ຮຽນທີ່ທ່ານເລືອກ ທາງໂຮງຮຽນກໍຈະແຈ້ງ ໃຫ້ທ່ານຊາບ. ທາງໂຮງຮຽນອາດຈະລະບຸວ່າ ທ່ານໄດ້ຖືກຈັດໃສ່ໃນບັນຊີລໍຖ້າ ແລະ ທ່ານຈະໄດ້ບ່ອນຮຽນຖ້າຫາກວ່າມີບ່ອນຫວ່າງ.

ຖ້າລູກທ່ານໄດ້ບ່ອນຮຽນໃນນຶ່ງຂອງໂຮງ ຮຽນທີ່ທ່ານເລືອກ ທ່ານຈະບໍ່ໄດ້ບ່ອນຮຽນ ໃນໂຮງຮຽນອື່ນທີ່ທ່ານເລືອກຕໍ່ລົງໄປ.

ຖ້າບໍ່ມີບ່ອນຫວ່າງໃນບັນດາໂຮງຮຽນທີ່ທ່ານໄດ້ຂໍໄປ, ລູກທ່ານກໍຈະຖືກຮັບປະກັນບ່ອນ ຮຽນຢູ່ໃນໂຮງຮຽນທ້ອງຖິ່ນຂອງພວກເຂົາທີ່ມີຢູ່ໃນບັນຊີຢູ່ໃນ**ພາກ B**, ຂຶ້ນກັບວ່າໂຮງຮຽນ ນັ້ນຈະຮັບເອົາໃບຂໍຈົດຊື່ຮຽນຂອງທ່ານຫຼືບໍ່.

ຖ້າທ່ານຮູ້ສຶກວ່າທ່ານບໍ່ໄດ້ຮັບຄວາມຍຸຕິ ທັມ ຫຼື ຄິດວ່າຜົນຮັບນີ້ ເປັນຜົນຮັບທີ່ບໍ່ ສົມເຫດສົມຜົນ ທ່ານສາມາດຍື່ນຄຳອຸທອນ ໄດ້. ຄຳອຸທອນນີ້ຕ້ອງເປັນລາຍລັກອັກ ສອນໄປຫາທ່ານຄູໃຫຍ່ຂອງໂຮງຮຽນ ມັທຍົມ.

## ພາກ D

**ຖ້າທ່ານໄດ້ຂໍເຂົ້າໂຮງຮຽນແບບຄັດເລືອກ ດ້ານການສຶກສາ** ກະຣຸນາໝາຍຕິກໃສ່ໃນ ປ່ອງທີ່ຢູ່ໃນ**ພາກ D** ຂອງຟອມນີ້ ແລະ ຂຽນຕື່ມ**ພາກ B, C** ຫຼື **ພາກ E** ເພື່ອໃນກໍຣະນີທີ່ລູກທ່ານບໍ່ໄດ້ບ່ອນຮຽນຢູ່ໂຮງຮຽນ ແບບຄັດເລືອກ.

## ພາກ E

**ຖ້າທ່ານບໍ່ຕ້ອງການບ່ອນຮຽນຢູ່ໃນໂຮງ ຮຽນຫຼວງ ກະຣຸນາຂຽນຕື່ມ ພາກ E.**

ການຂຽນຕື່ມ**ພາກ E** ຈະປິດການປະຕິບັດ ໝົດທຸກຢ່າງຂອງໂຮງຮຽນຫຼວງຂອງຣັຖບານ NSW ກ່ຽວກັບການຈັດຫາບ່ອນຮຽນໃນ Year 7 ຂອງລູກທ່ານ.



**ກະຊວງສຶກສາ ຣັດ NSW**

# ການສເນີຄວາມສົນໃຈ (Expression of Interest)

## ການຈັດບ່ອນຮຽນໃນ Year 7 ໃນໂຮງຮຽນ ຫຼວງຂອງຣັດ NSW.

## Placement in Year 7 in a NSW Government school.

ກະຣຸນາຂຽນຕື່ມຟອມນີ້ເປັນພາສາອັງກິດ.

**SRN** [ ][ ][ ][ ][ ][ ][ ][ ][ ]

ສໍາລັບຫ້ອງການໃຊ້ເທົ່ານັ້ນ (ພໍ່ແມ່/ຜູ້ປົກ ຄອງຢ່າຂຽນຕື່ມ) (Office use only)

## A - ຂໍ້ມູນຂອງນັກຮຽນ (A. Student information)

**ນາມສະກຸນ**
**Family name** ____________________

**ຊື່**
**First given name** ____________________

**ຊື່ກາງ Middle (ອື່ນໆ)**
**Middle (other) name/s** ____________________

**ເພດ**
**Gender** ☐ ເພດຊາຍ Male ☐ ເພດຍິງ Female

**ວັນເກີດ**
**Date of birth** [ ][ ]/[ ][ ]/[ ][ ][ ][ ]
*ວັນທີ ເດືອນ ປີ*

**ທີ່ຢູ່** *(ຕົວຢ່າງ 1 High Street, Sydney, NSW, 2000)* **(Residential address)**

____________________

____________________

**ຊື່ຂອງພໍ່ແມ່/ຜູ້ປົກຄອງ**
**Name of parent/carer** ____________________

**ເບີໂທຣະສັບ** *(ມືຖື)*
**Phone number** *(mobile)* ____________________

**ເບີໂທຣະສັບ** *(ເຮືອນ)*
**Phone number** *(home)* ____________________

**ເບີໂທຣະສັບ** *(ວຽກ)*
**Phone number** *(work)* ____________________

**ອີເມລ໌**
**Email address** ____________________

**ໂຮງຮຽນປະຖົມຂອງນັກຮຽນໃນປັດຈຸບັນ (Student's current primary school)**

____________________

**ການແຈ້ງ (Declaration)**

ຂ້າພະເຈົ້າຂໍແຈ້ງວ່າ ຂໍ້ມູນທີ່ໄດ້ເອົາໃຫ້ຢູ່ ໃນຟອມ ການສເນີຄວາມສົນໃຈ ນີ້ ຕາມທີ່ ຂ້າພະເຈົ້າຮູ້ແລະເຊື່ອວ່າເປັນຂໍ້ມູນ ທີ່ຖືກ ຕ້ອງແລະຄົບຖ້ວນ
ຂ້າພະເຈົ້າຮັບຮູ້ວ່າ ຖ້າຄໍາຖແລງໃດໆທີ່ຢູ່ໃນ ໃບສມັກນີ້ພາຍຫຼັງມາຖ້າພົບວ່າບໍ່ເປັນ ຄວາມຈິງ ຫຼື ບິດເບືອນໄປໃນທາງບໍ່ແມ່ນ *ການຕັດສິນ*ໃຈໃດໆທີ່ໄດ້ມີຕໍ່ຟອມສມັກຮຽນນີ້ອາດຈະຖືກຖອນຄືນ.
ຂ້າພະເຈົ້າເຂົ້າໃຈ ດີວ່າການຈົດຊື່ຮຽນຫຼັງຈາກວິທີການຈັດ ບ່ອນຮຽນນີ້ຈະຂຶ້ນຢູ່ກັບການພິຈາຣະນາ ແລະ ການຮັບເອົາ ໃບຈົດຊື່ເຂົ້າຮຽນໃນໂຮງ ຮຽນຫຼວງຂອງຣັດ *NSW (Application to Enrol in a NSW Government School).*

**ລາຍເຊັນຂອງ ພໍ່ແມ່/ຜູ້ປົກຄອງ (Signature of parent/carer)** ____________________

**ຂຽນຊື່ (Print name)** ____________________

**ວັນທີ**
**Date** [ ][ ]/[ ][ ]/[ ][ ][ ][ ]
*ວັນທີ ເດືອນ ປີ*

## B - ການຈັດບ່ອນຮຽນຢູ່ໃນໂຮງຮຽນ ຫຼວງທ້ອງຖິ່ນຂອງທ່ານ (B. Placement at local government school)

**ໂຮງຮຽນທ້ອງຖິ່ນຂອງທ່ານ (Your local school)**

____________________

ກະຣຸນາເຊັນຊື່ຢູ່ໃນພາກຂ້າງລຸ່ມນີ້ຖ້າທ່ານ ຕ້ອງການໃຫ້ລູກທ່ານເຂົ້າ ໂຮງຮຽນທີ່ຖືກກໍານົດໃຫ້ເປັນໂຮງຮຽນຫຼວງທ້ອງຖິ່ນ.

**ລາຍເຊັນຂອງ ພໍ່ແມ່/ຜູ້ປົກຄອງ (Signature of parent/carer)** ____________________

**ວັນທີ**
**Date** [ ][ ]/[ ][ ]/[ ][ ][ ][ ]
*ວັນທີ ເດືອນ ປີ*

ຖ້າທ່ານໄດ້ເຊັນຊື່ຢູ່ຂ້າງເທິງ ແລະ ຕ້ອງການໃຫ້ລູກທ່ານເຂົ້າໂຮງຮຽນນີ້ **ເທົ່ານັ້ນ**, ບັດນີ້ທ່ານກໍໄດ້ຂຽນຕື່ມຟອມແລ້ວຢ່າງສົມບູນ.

## C - ການພິຈາຣະນາຈັດບ່ອນຮຽນໃຫ້ຢູ່ ໃນ ໂຮງຮຽນຫຼວງອື່ນໆ

## C. Consideration to be given to placement at other government schools

**ຖ້າທ່ານເລືອກທີ່ຈະໃຫ້ລູກທ່ານເຂົ້າໂຮງ ຮຽນຫຼວງບ່ອນນຶ່ງ, ທ່ານສາມາດໃຫ້ ຄວາມມັກໄດ້ສູງສຸດສາມຢ່າງ. ທ່ານສາມາດລວມເອົາ:**

- **ໂຮງຮຽນຫຼວງພິເສດ.** ກະລຸນາຮັບຊາບວ່າທ່ານຖືກຊຸກຍູ້ໃຫ້ຂໍຄວາມຊ່ວຍເຫຼືອຈາກ ອຳນວຍການໂຮງຮຽນປະຖົມຖ້າທ່ານຕ້ອງການໃຫ້ລູກຂອງທ່ານໄດ້ຮັບການພິຈາລະນາເຂົ້າ ຮຽນໃນໂຮງຮຽນພິເສດສະເພາະ.
- ໂຮງຮຽນທີ່ມີ**ຫ້ອງຮຽນທີ່ມີການຊ່ວຍເຫຼືອ** ເພື່ອຮອງຮັບບັນດານັກຮຽນທີ່ມີຄວາມຕ້ອງການຮຽນຮູ້ແລະການຊ່ວຍເຫຼືອເພີ້ມເຕີມ. ກະຣຸນາຮັບຊາບວ່ານີ້ແມ່ນຜ່ານຄະນະກຳມະການ ຈັດບ່ອນຮຽນ. **ທ່ານຄວນຊອກຫາຄວາມຊ່ວຍເຫຼືອຈາກທ່ານຄູໃຫຍ່ໂຮງຮຽນປະຖົມຖ້າທ່ານຕ້ອງການໃຫ້ລູກຂອງທ່ານໄດ້ຮັບການພິຈາລະນາ ສຳ ລັບການຈັດຫາບ່ອນຮຽນໃນ ຫ້ອງຮຽນທີ່ມີການຊ່ວຍເຫຼືອ.**
- ໂຮງຮຽນຫຼວງອື່ນທີ່**ບໍ່ແມ່ນຫ້ອງຖິ່ນ**. ກະຣຸນາອະທິບາຍເຫດຜົນຂອງທ່ານໃນການຊອກຫາບ່ອນຮຽນທີ່ບໍ່ຢູ່ໃນທ້ອງຖິ່ນຢູ່ທາງລຸ່ມຂອງ ໜ້າ ນີ້ (ແລະ ໃນ ໜ້າທີ 7 ຖ້າ ຕ້ອງການ).

ຂ້າພະເຈົ້າຕ້ອງການຂໍບ່ອນຮຽນໃຫ້ລູກຂອງຂ້າພະເຈົ້າຢູ່ໃນໂຮງຮຽນຫຼວງຕ່າງໆດັ່ງຕໍ່ ລົງໄປນີ້:

| | |
|---|---|
| **ໂຮງຮຽນທີ່ເລືອກ ທີ 1**<br>**Choice 1 school** | |
| **ໂຮງຮຽນທີ່ເລືອກ ທີ 2**<br>**Choice 2 school** | |
| **ໂຮງຮຽນທີ່ເລືອກ ທີ 3**<br>**Choice 3 school** | |

ຂ້າພະເຈົ້າເຂົ້າໃຈດີວ່າຖ້າລູກຂອງຂ້າພະ ເຈົ້າບໍ່ໄດ້ບ່ອນຮຽນຢູ່ໃນໂຮງຮຽນໃດນຶ່ງທີ່ ກ່າວຢູ່ຂ້າງເທິງນີ້ ລາວຈະຖືກຈັດໃຫ້ເຂົ້າຢູ່ ໃນໂຮງຮຽນທີ່ຖືກກຳນົດໃຫ້ເປັນ ໂຮງຮຽນ ທ້ອງຖິ່ນທີ່ມີຢູ່ໃນບັນຊີໃນພາກ B.

**ລາຍເຊັນຂອງ ພໍ່ແມ່/ຜູ້ປົກຄອງ (Signature of parent/carer)**

**ວັນທີ Date** __ __ / __ __ / __ __ __ __

*ວັນທີ ເດືອນ ປີ*

## ສຳລັບທ່ານຄູໃຫຍ່ຂອງໂຮງຮຽນປະຖົມໃຊ້ ເທົ່ານັ້ນ (Primary school principal use only)

Primary school principals may wish to include comments to assist secondary school principals make placement decisions. These comments should refer to the reasons given by parents and carers.

**Signature of primary school principal**

**Date** __ __ / __ __ / __ __ __ __

*day month year*

**ຂຽນຕື່ມຂໍ້ມູນທີ່ຢູ່ຂ້າງລຸ່ມນີ້ຖ້າຫາກທ່ານຂໍ ບ່ອນຮຽນຢູ່ໂຮງຮຽນທີ່ບໍ່ຢູ່ໃນທ້ອງຖິ່ນເທົ່າ ນັ້ນ. ທ່ານບໍ່ຕ້ອງຂຽນຕື່ມພາກນີ້ ຖ້າທ່ານ ຂໍຮຽນຢູ່ໂຮງຮຽນພິເສດສະເພາະ ຫຼື ຫ້ອງຮຽນທີ່ມີການຊ່ວຍເຫຼືອ.** ຖ້າຫາກຈຳເປັນ ທ່ານສາມາດ ຄັດຕິດຂໍ້ມູນເພີ້ມຕື່ມມານຳເພື່ອຊ່ວຍອູ້ມຊູ ການຂໍບ່ອນຮຽນຢູ່ໂຮງຮຽນທີ່ບໍ່ຢູ່ໃນທ້ອງຖິ່ນຂອງທ່ານ. ຈົ່ງເບິ່ງຢູ່ໜ້າ 2 ແລະ 3ເພື່ອເອົາ ຂໍ້ມູນເພີ້ມຕື່ມ.

**ຊື່ຂອງໂຮງຮຽນທີ່ເລືອກ ທີ 1**
**Name of Choice 1 school**

ກະຣຸນາອະທິບາຍເຫດຜົນຂອງທ່ານໃນ ການຂໍບ່ອນຮຽນຢູ່ໃນໂຮງຮຽນນີ້ (ຈົ່ງເບິ່ງ ຂໍ້ກຳນົດການຄັດເລືອກສະເພາະໃນການ ຈົດຊື່ເຂົ້າຮຽນ).

## C (ຕໍ່) C. (continued)

**ຊື່ຂອງໂຮງຮຽນທີ່ເລືອກ ທີ 2**
**Name of Choice 2 school**

ກະຣຸນາອະທິບາຍເຫດຜົນຂອງທ່ານໃນ ການຂໍບ່ອນຮຽນຢູ່ໃນໂຮງຮຽນນີ້ (ຈົ່ງເບິ່ງ ຂໍ້ກຳນົດການຄັດເລືອກສະເພາະໃນການ ຈົດຊື່ເຂົ້າຮຽນ).

**ຊື່ຂອງໂຮງຮຽນທີ່ເລືອກ ທີ 3**
**Name of Choice 3 school**

ກະຣຸນາອະທິບາຍເຫດຜົນຂອງທ່ານໃນ ການຂໍບ່ອນຮຽນຢູ່ໃນໂຮງຮຽນນີ້ (ຈົ່ງເບິ່ງ ຂໍ້ກຳນົດການຄັດເລືອກສະເພາະໃນການ ຈົດຊື່ເຂົ້າຮຽນ).

## D - ໂຮງຮຽນແບບຄັດເລືອກ ທາງດ້ານ ການສຶກສາ (D. Academically selective school)

☐ ຂ້າພະເຈົ້າໄດ້ຍື່ນໃບຄຳຮ້ອງຂໍບ່ອນຮຽນຢູ່ ໃນໂຮງຮຽນແບບຄັດເລືອກ ທາງດ້ານການ ສຶກສາແລ້ວ. ລູກຂອງຂ້າພະເຈົ້າຈະ ເຂົ້າ ສອບ ເສັງເພື່ອເຂົ້າໂຮງຮຽນມັທຍົມ ແບບຄັດເລືອກ.
I have submitted an application for placement in an academically selective school. My child will be sitting for the Selective High Schools test.

*ໃນກໍຣະນີທີ່ລູກທ່ານບໍ່ໄດ້ບ່ອນຮຽນໃນໂຮງ ຮຽນເຫຼົ່ານີ້ ກະຣຸນາຂຽນຕື່ມ ພາກ B, ພາກ C ຫຼື ພາກ E ຢູ່ໃນຟອມນີ້ດ້ວຍ.*

## E - ບໍ່ຕ້ອງການບ່ອນຮຽນ (E. Placement not required)

ຂ້ອຍຢືນຢັນວ່າລູກຂອງຂ້ອຍຈະບໍ່ຊອກຫາບ່ອນຮຽນຢູ່ໂຮງຮຽນລັດຖະບານ NSW ໃນປີໜ້າ. ຂ້າພະເຈົ້າໄດ້ອ່ານແລະເຂົ້າໃຈຂໍ້ມູນກ່ຽວກັບການສົ່ງນີ້ລວມທັງການເກັບກຳຂໍ້ມູນສ່ວນບຸກຄົນ. ລູກຂອງຂ້ອຍຈະເຂົ້າຮຽນຢູ່ໂຮງຮຽນດັ່ງຕໍ່ໄປນີ້.*
I confirm that my child will not be seeking placement at a NSW Government school next year. I have read and understood the information about this submission including the collection of personal information. My child will be attending the following school.*

**ລາຍເຊັນຂອງ ພໍ່ແມ່/ຜູ້ປົກຄອງ (Signature of parent/carer)**

**ວັນທີ**
**Date** __ __ / __ __ / __ __ __ __
*ວັນທີ ເດືອນ ປີ*

*ການໃຫ້ຂໍ້ມູນນີ້ບໍ່ແມ່ນສິ່ງທີ່ຕ້ອງກະທຳ ແຕ່ຖ້າທ່ານເອົາໃຫ້ກໍຂໍສະແດງຄວາມ ຮູ້ບຸນຄຸນ.

### ການຖະແລງຄວາມເປັນສ່ວນຕົວ (Privacy Statement)

ຂໍ້ມູນສ່ວນຕົວທີ່ໃຫ້ໄວ້ຢູ່ໃນແບບຟອມນີ້ທີ່ມີຊື່**ການສະເໜີຄວາມສົນໃຈ - ການຈັດບ່ອນຮຽນໃນ Year 7** ໃນໂຮງຮຽນລັດຖະບານ NSW ແມ່ນໄດ້ຖືກເກັບກຳເພື່ອຈຸດປະສົງຂອງການປະສານງານການຮ້ອງຂໍການເຂົ້າຮຽນ Year 7ໃນ ໂຮງຮຽນລັດຖະບານ NSW. ຂໍ້ມູນໃດໆທີ່ໄດ້ ເອົາໃຫ້ NSW Department of Education (**the Department**) ຈະຖືກນຳໃຊ້, ເປີດເຜີຍ ແລະ ເກັບຮັກສາໄວ້ໂດຍສອດຄ່ອງກັບກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ NSW.

ຂໍ້ມູນບາງຢ່າງແມ່ນຕ້ອງການໂດຍ **the Department** ເພື່ອໃຫ້ຖືກຕ້ອງຕາມໜ້າທີ່ການດູແລແລະພາລະກິດທາງດ້ານກົດໝາຍອື່ນໆພາຍໃຕ້ກົດໝາຍສາທາລະນະສຸກ, ການສຶກສາແລະການປົກປ້ອງເດັກ ແລະ ເພື່ອໃຫ້ເປັນໄປຕາມຂໍ້ກຳນົດການເກັບກຳຂໍ້ມູນແລະການລາຍງານ ພາຍໃຕ້ຂໍ້ສັນຍາການລະດົມທຶນຂອງລັດຖະບານ ຄອມມອນແວລທ໌. ສິ່ງເຫຼົ່ານີ້ອາດຈະກ່ຽວຂ້ອງກັບການປະເມີນຜົນ ແລະການປະເມີນຜົນໄດ້ຮັບຂອງນັກຮຽນ.

ຂໍ້ມູນອາດຈະຖືກເປີດເຜີຍໃຫ້ໜ່ວຍງານຂອງລັດຖະບານຂອງ ຣັດ NSW ແລະ ຄອມມອນແວລທ໌ ແລະອົງການຈັດຕັ້ງອື່ນໆເພື່ອຈຸດປະສົງຂ້າງເທິງນີ້ ແລະຕາມການອະນຸຍາດ ຫຼືຕ້ອງການໂດຍກົດໝາຍ.

ຂໍ້ມູນຈະຖືກເກັບໄວ້ໃນຖານຂໍ້ມູນເອເລັກໂຕຣນິກທີ່ປອດໄພ. ທ່ານສາມາດເຂົ້າເຖິງ ຫຼື ແກ້ໄຂຂໍ້ມູນໄດ້ໂດຍການຕິດຕໍ່ໂຮງຮຽນຂອງລູກທ່ານ. ຖ້າທ່ານມີຄວາມເປັນຫ່ວງ ຫຼື ການຮ້ອງທຸກກ່ຽວກັບຂໍ້ມູນທີ່ເກັບກຳມາ ຫຼື ວິທີການນຳໃຊ້ ຫຼື ເປີດເຜີຍ ທ່ານຄວນຕິດຕໍ່ຫາໂຮງຮຽນ.

ຖ້າທ່ານເລືອກທີ່ຈະບໍ່ໃຫ້ຂໍ້ມູນບາງອັນຕາມທີ່ ຮ້ອງຂໍ ມັນອາດສົ່ງຜົນກະທົບຕໍ່ການລົງທະບຽນຂອງລູກທ່ານ, ການຈັດຊັບພະຍາກອນຂອງໂຮງຮຽນ ຫຼືຕອບສະໜອງຄວາມຕ້ອງການດ້ານການສຶກສາຂອງລູກທ່ານ.

ຂໍ້ມູນເພີ່ມເຕີມກ່ຽວກັບການເກັບກຳຂໍ້ມູນໃນ ຂະນະທີ່ລູກຂອງທ່ານລົງທະບຽນຢູ່ໂຮງຮຽນລັດຖະບານ NSW, ແລະພວກເຮົາປົກປ້ອງຄວາມເປັນສ່ວນຕົວຂອງທ່ານແນວໃດ, ມີຢູ່ໃນເວັບໄຊທ໌ຂອງ Department ຫຼືຈາກໂຮງຮຽນຂອງທ່ານ. ທ່ານສາມາດໄດ້ຮັບສຳເນົາຂອງແຈ້ງການເກັບກຳຂໍ້ມູນຄວາມເປັນສ່ວນຕົວຂອງ Department ໄດ້ທີ່ https://education.nsw.gov.au/content/dam/main-education/about-us/rights-and-accountability/media/documents/privacy/collection-notice.pdf

ສຳລັບບັນດານັກຮຽນທີ່ພວມເຂົ້າໂຮງຮຽນປະຖົມຫຼວງ ກະຣຸນາສົ່ງຟອມນີ້ກັບຄືນໄປຫາໂຮງຮຽນປະຖົມຂອງລູກທ່ານ. ສຳລັບບັນດານັກຮຽນທີ່ບໍ່ໄດ້ເຂົ້າໂຮງຮຽນປະຖົມຫຼວງ ກະຣຸນາສົ່ງຟອມນີ້ໄປໃຫ້ໂຮງຮຽນ ມັທຍົມຫຼວງທີ່ເປັນໂຮງຮຽນທີ່ທ່ານເລືອກເປັນທີນຶ່ງເພື່ອຈົດຊື່ເຂົ້າຽນ. **ຟອມສເນີຄວາມສົນໃຈໝົດທຸກຟອມຕ້ອງຖືກສົ່ງກັບ ຄືນໄປຕາມ ຫຼື ກ່ອນວັນທີທີ່ບົ່ງໄວ້.**



ພວກເຮົາຮັບຮູ້ບ້ານເກີດເມືອງນອນຂອງຊາວອາບໍຣິຈິໂນລທັງໝົດແລະຂໍສະແດງຄວາມເຄົາລົບຂອງພວກເຮົາຕໍ່ປະເທດ.

**Say hello**


@NSWDepartmentofEducation

@NSWEducation

@NSWEducation

education.nsw.gov.au



© 2023 NSW Department of Education



GPO Box 33, Sydney NSW 2001 Australia

Phone: 1300 679 332